ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 26 ຫາ 30 ມິຖຸນາ 2023



ງານວາງສະແດງ ຜະລິດຕະພັນກະສິກຳລາວ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




ເພື່ອເປັນການຊຸກຍູ້ສົ່ງເສີມ ສິນຄ້າກະສິກຳລາວ, ເປັນນິມິດໝາຍທີ່ສຳຄັນເປັນໂອກາດດີໃຫ້ແກ່ຜູ້ຜະລິດ, ຜູ້ປະກອບການດ້ານກະສິກຳ ແລະ ກຸ່ມຊາວກະສິກອນໄດ້ນຳສະເໜີຜົນຜະລິດ, ເຕັກນິກການຜະລິດ ລວມໄປເຖິງການປຸງແຕ່ງ ໃຫ້ແກ່ຜູ້ເຂົ້າມາທ່ຽວຊົມ ແລະ ເປັນເວທີແລກປ່ຽນບົດຮຽນດ້ານການຄ້າ, ການລົງທຶນ ລວມທັງການແລກປ່ຽນບົດຮຽນ ໃນການສົ່ງອອກຜະລິດຕະພັນກະສິກຳ, ໃນວັນທີ 26 ມິຖຸນາ 2023 ທີ່ຜ່ານມາ ກະຊວງກະສິກຳ ແລະ ປ່າໄມ້ ໄດ້ຈັດງານສະແດງຜະລິດຕະພັນກະສິກຳລາວຂຶ້ນ ທີ່ສູນການຄ້າລາວໄອເຕັກ ຕຶກເກົ່າ ໂດຍການເຂົ້າຮ່ວມຂອງ ທ່ານ ນາງ ວັນດາລາ ສີພັນດອນ ພັນລະຍາທ່ານນາຍົກລັດຖະມົນຕີ, ທ່ານ ກິແກ້ວ ສິງນາວົງ ຮອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ທ່ານ ZHAO WENYU ທີ່ປຶກສາເສດຖະກິດ-ການຄ້າ ຂອງສະຖານທູດ ສປ ຈີນ ປະຈຳ ສປປ ລາວ, ທ່ານ CHEN QINRU ປະທານສະພາການຄ້າກວາງຊີ ສປ ຈີນ ປະຈຳ ສປປ ລາວ ພ້ອມນີ້ມີບັນດາທ່ານພັນລະຍາການນຳ ພັກ-ລັດ ແລະ ແຂກທີ່ເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ກິແກ້ວ ສິງນາວົງ ຮອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ໄດ້ກ່າວວ່າ: ພັກ ແລະ ລັດຖະບານ ໄດ້ກຳນົດເອົາກະສິກຳ ເປັນວຽກໜຶ່ງທີ່ສຳຄັນໃນໂຄງປະກອບເສດຖະກິດແຫ່ງຊາດ. ໃນໄລຍະຜ່ານມາ, ກະຊວງກະສິກຳ ແລະ ປ່າໄມ້ ຮ່ວມກັບບັນດາຂະແໜງການ, ທ້ອງຖິ່ນ ແລະ ຜູ້ປະກອບການ ໄດ້ມີການຊຸກຍູ້ສົ່ງເສີມການຜະລິດກະສິກຳເປັນສິນຄ້າ ໃຫ້ມີການເຕີບໃຫຍ່ຂະຫຍາຍຕົວທັງປະລິມານ ແລະ ຄຸນນະພາບ ເພື່ອເປັນສິນຄ້າຮັບໃຊ້ພາຍໃນ ທົດແທນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ ສ້າງລາຍຮັບໃຫ້ແກ່ປະເທດຊາດ ແລະ ປະກອບສ່ວນເຂົ້າໃນການຫຼຸດຜ່ອນຄວາມທຸກຍາກເທື່ອລະກ້າວ.

ແຕ່ເຖິງແນວໃດກໍ່ຕາມ ພາຍຫຼັງທີ່ ສປປ ລາວ ເຂົ້າເປັນສະມາຊິກຂອງອົງການ ການຄ້າໂລກ, ສະມາຊິກອາຊຽນ ແລະ ສະມາຊິກປະຊາຄົມເສດ









ຖະກິດອາຊຽນ ເຮັດໃຫ້ມີສິ່ງທ້າທາຍອັນໃໝ່ເພີ່ມຂຶ້ນຫຼາຍດ້ານ ເນື່ອງຈາກຕ້ອງໄດ້ຈັດຕັ້ງປະຕິບັດຕາມພັນທະສາກົນ ທີ່ ສປປ ລາວ ເປັນພາຄີ, ໂດຍສະເພາະ ການຈັດຕັ້ງປະຕິບັດສັນຍາວ່າດ້ວຍ ສຸຂານາໄມພືດ ແລະ ສັດ ຂອງອົງການ ການຄ້າໂລກ ທີ່ຕ້ອງໄດ້ເຂັ້ມງວດໃນການປະຕິບັດຕາມຂໍ້ກຳນົດເງື່ອນໄຂທີ່ປະເທດຄູ່ຄ້າວາງໄວ້ ຊຶ່ງທັງໝົດເຫຼົ່ານັ້ນ ລ້ວນແລ້ວແຕ່ເປັນສິ່ງທ້າທາຍສຳລັບການຄ້າກະສິກຳໃນໄລຍະໃໝ່. ພ້ອມກັນນັ້ນ, ບັນຫາຕົ້ນທຶນການຜະລິດສູງ, ຄວາມຫຼາກຫຼາຍຂອງຜະລິດຕະພັນລວມທັງການປຸງແຕ່ງຫຸ້ມຫໍ່ ກໍ່ຍັງເປັນສິ່ງທ້າທາຍສຳລັບພວກເຮົາ. ເຖິງແມ່ນວ່າປະເທດເຮົາຈະພົບກັບບັນຫາ ແລະ ສິ່ງທ້າທາຍ ເຫຼົ່ານັ້ນກໍ່ຕາມ, ແຕ່ດ້ວຍທ່າແຮງບົ່ມຊ້ອນ ທີ່ປະເທດເຮົາມີ ໂດຍສະເພາະເງື່ອນໄຂທາງທຳມະຊາດ, ນະໂຍບາຍຂອງ ພັກ-ລັດ, ມູນເຊື້ອຄວາມດຸໝັ່ນ, ຄວາມອົດທົນ ຂອງຜູ້ຜະລິດ, ຜູ້ປະກອບການກະສິກຳຢູ່ລາວ ສາມາດຜະລິດ-ປຸງແຕ່ງ ສິນຄ້າກະສິກຳ ທີ່ສະອາດ, ປອດໄພ ເພີ່ມຂຶ້ນຫຼາຍພໍສົມຄວນ ປະກອບສ່ວນເຮັດໃຫ້ ລວມຍອດຜະລິດຕະພັນພາຍໃນ (GDP) ຂອງຂະແໜງກະສິກຳ ຂະຫຍາຍຕົວ ໃນລະດັບ 2,9% ກວມເອົາປະມານ 17,5% ຂອງລວມຍອດຜະລິດຕະພັນພາຍໃນ, ການສົ່ງອອກສິນຄ້າກະສິກຳມີມູນຄ່າ 1,733 ລ້ານໂດລາສະຫະລັດ ໃນປີ 2022. ໃນນາມ ຄະນະຮັບຜິດຊອບຈັດງານ ກໍ່ຄືໃນນາມການນຳກະຊວງກະສິກຳ ແລະ ປ່າໄມ້ ຂໍເຊີນຊວນທຸກພາກສ່ວນ ເຂົ້າມາຊົມ-ມາຊື້ ສິນຄ້າໃນງານ ເພື່ອພ້ອມກັນຊຸກຍູ້-ສົ່ງເສີມ ຜະລິດຕະພັນກະສິກຳລາວໃຫ້ສາມາດແຂ່ງຂັນກັບ ພາກພື້ນ ແລະ ສາກົນ ໄດ້ເທື່ອລະກ້າວ.

ການຈັດງານຄັ້ງນີ້ ຈະດຳເນີນເລີ່ມແຕ່ ວັນທີ 24 ມິຖຸນາ ຮອດວັນທີ 2 ກໍລະກົດ 2023 ພາຍໃນງານໄດ້ມີຜູ້ປະກອບການ, ຊາວກະສິກອນນຳເອົາຜົນຜະລິດກະສິກຳ, ຜະລິດຕະພັນແປຮູບ ມາວາງສະແດງ ແລະ ຈຳໜ່າຍ ຫຼາຍກວ່າ 50 ບູດພາຍໃນງານ.




ສະໜັບສະໜູນໂດຍ
ປຸ໋ຍໂພທຣີ ຫຼຸດຕົ້ນທຶນ ເພີ່ມຜົນຜະລິດເປັນມິດກັບສິ່ງແວດລ້ອມ ຕ້ອງປຸ໋ຍໂພທຣີ
ຕິດຕໍ່ໄດ້ທີ່ຕົວແທນຈຳໜ່າຍທົ່ວປະເທດ ຂອງບໍລິສັດເອໂຟເອສລາວ ຈຳກັດຜູ້ດຽວ, ສຳນັກງານຕັ້ງຢູ່
ບ້ານ ດົງປ່າແຫຼບ ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ ໂທ:020 5961 6564; 020 5592 7332




ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສີງຄາມ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໄຊລາ ສິມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳມອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;